ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອັດຕະປື

ອັດຕະປື, ວັນທີ 27 ກຸມພາ 2017

## ບົດບັນທຶກ

## ກອງປະຊຸມອົງການປົກຄອງແຂວງ ປະຈຳເດືອນ 1-2 ປີ 2017

ກອງປະຊຸມອົງການປົກຄອງແຂວງ ປະຈຳເດືອນ 1-2 ປີ 2017 ໄດ້ດຳເນີນໃນຕອນເຊົ້າຂອງວັນທີ 22/2/2017 ທີ່ຫ້ອງປະຊຸມສຳນັກງານປົກຄອງແຂວງ, ໂດຍພາຍໃຕ້ການເປັນປະທານຂອງທ່ານ ປອ ນາມ ວິຍະເກດ ກຳມະການສູນກາງພັກ, ເລຂາພັກແຂວງ-ເຈົ້າແຂວງອັດຕະປື ແລະ ມີບັນດາທ່ານຮອງເຈົ້າແຂວງ, ຫົວໜ້າ-ຮອງພະແນກການ, ຫົວໜ້າກອງບັນຊາການ ປກຊ-ປກສ ແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງແລະເຈົ້າເມືອງ 5 ຕົວເມືອງ ເຂົ້າຮ່ວມທັງໝົດ 50 ຄົນ, ຍິງ 5 ຄົນ.

ກອງປະຊຸມໄດ້ພ້ອມກັນຄົ້ນຄວ້າປຶກສາຫາລື ແລະ ປະກອບຄຳຄິດຄຳເຫັນເປັນເອກະພາບກັນຕໍ່ເນື້ອໃນບົດສະຫຼຸບລາຍງານການອອກລະບຽບການຄຸ້ມຄອງໂຮງແຮມ,ຮ້ານອາຫານ,ຮ້ານບັນເທີງແລະການຄຸ້ມຄອງປ້າຍຕ່າງໆການສຳຫຼວດປັກຫຼັກໝາຍຫຼັ່ງທ່ອງທ່ຽວ.ເຜີຍແຜ່ຄຳສັ່ງແນະນຳການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມປີ 2017.ຮ່າງບົດແນະນຳກ່ຽວກັບການຈັດຕັ້ງປະຕິບັດລາຍຮັບ-ລາຍຈ່າຍ ປີ 2017,ຄວາມຄືບໜ້າການເກັບຖານລາຍຮັບການແກ້ໄຂການປະກອບອາຊີບຂອງຄົນຕ່າງດ້າວ,ຕ່າງປະເທດ,ຄວາມຄືບໜ້າການເກັບລາຍຮັບ 2ເດືອນທີ່ຜ່ານມາ.ການຜະລິດເຂົ້ານາປີແລະການກະກຽມຜະລິດເປັນສິນຄ້າປີ 2017ໃນແຕ່ລະຈຸດສຸມ. ບັນດາກອງທຶນພັດທະນາໃນ 3 ຕົວເມືອງແລະກອງທຶນຜະລິດເປັນສິນຄ້າ.ບັນດາໂຄງການທີ່ແຂວງອະນຸມັດງົບປະມານແລະການຈັດຕັ້ງປະຕິບັດການຄຸ້ມຄອງບັນຫາໄມ້ທີ່ບໍ່ທັນຂຶ້ນບັນຊີແລະຜ່ານຮ່າງແຜນການດຳເນີນງານຂອງອົງການປົກຄອງແຂວງ.

ຜ່ານການຄົ້ນຄວ້າປຶກສາຫາລື ແລະ ການປະກອບຄວາມຄິດຄວາມເຫັນ ຢ່າກົງໄປກົງມາ, ຈຶ່ງໄດ້ມີຄວາມເປັນເອກະພາບກັນ ສືບຕໍ່ຈັດຕັ້ງປະຕິບັດແລະແກ້ໄຂໃນຕໍ່ໜ້າ ດັ່ງມີລາຍລະອຽດ ດັ່ງນີ້:

1. ກ່ຽວກັບການການອອກລະບຽບການຄຸ້ມຄອງໂຮງແຮມ, ຮ້ານອາຫານ, ຮ້ານບັນເທີງ ແລະ ການຄຸ້ມຄອງປ້າຍຕ່າງໆການສຳຫຼວດປັກຫຼັກໝາຍຫຼັ່ງທ່ອງທ່ຽວ.

- ວຽກງານຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ: ມອບໃຫ້ພະແນກ ຖວທ ແຂວງແລະ ຖວທເມືອງຈັດຕັ້ງປະຕິບັດຕາມລະບຽບຢ່າງເຂັ້ມງວດ, ໃນກໍລະນີຈຳເປັນໃຫ້ອອກນິຕິກຳເພື່ອຄຸ້ມຄອງຊື່ວຄາວແລະສຶກສາວິທີແກ້ໄຂທັນເປັນລະບຽບສະເພາະຂອງແຂວງ ໃຫ້ສະພາບມີຄວາມສະຫງົບ ຈົນກວ່າຈະມີລະບຽບການປັບປຸງໃໝ່ຈາກ ກະຊວງທີ່ກ່ຽວຂ້ອງ.
- ສຳລັບເຂດທ່ອງທ່ຽວແລະເຂດຫວງຫ້າມຕ້ອງກຳນົດລະບຽບການ ໃນການຄຸ້ມຄອງແຕ່ລະເຂດແຫຼ່ງທ່ອງ

ທ່ຽວ ເປັນຕົ້ນ : ແຫຼ່ງທ່ອງທ່ຽວໜອງຟ້າ,ເຊປ້ອງໄລ ແລະ ແຫຼ່ງທ່ອງທ່ຽວອື່ນໆ.ແລະສົມທົບກັບພະແນກຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມແຂວງ ໂດຍສະເພາະການນຳໃຊເຄື່ອງມືໃນການອັດແທກໄປນຳໃຊ້ໃນເຂດດັ່ງກ່າວ.

2. ກ່ຽວກັບຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມກໍຄືແຜນການລົງທຶນຂອງລັດໃນໄລຍະ 5 ປີ ຄັ້ງທີ XIII ( 2016-2020) ຂອງແຂວງ

- ມອບໃຫ້ພະແນກແຜນການແລະການລົງທຶນແຂວງກວດກາຄືນບັນດາໂຄງການຕ່າງໆທີ່ເປັນໂຄງການບຸລິມະສິດຂອງແຂວງ, ພ້ອມກັນນັ້ນ ຕ້ອງກຳນົດໃຫ້ລະອຽດຈະແຈ້ງບັນດາໂຄງການທີ່ເປັນຈຸດສຸມຂອງແຂວງ ແລະ ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບໃນການຈັດສັນທຶນໃນການສຳລະສະສາງໂຄງການຕ່າງໆເພື່ອໃຫ້ສອດຄ່ອງກັບສະພາຮັບຮອງ.

3. ຮ່າງບົດແນະນຳກ່ຽວກັບການຈັດຕັ້ງປະຕິບັດລາຍຮັບ-ລາຍຈ່າຍ ປີ 2017 :

- ມອບໃຫ້ພະແນກການເງິນແຂວງຄົ້ນຄວ້າ,ກວດກາຄືນ ແລະ ປັບປຸງຄືນລະອຽດກ່ຽວກັບພື້ນຖານລາຍຮັບເປັນຕົ້ນບັນດາຫົວໜ່ວຍດຳເນີນທຸລະກິດຕ່າງໆ.

- ກ່ຽວກັບການກຳນົດນົດອັດຕາການເດີນທາງແລະເງິນແຮຕ່າງໆໃນພາຍໃນແລະຕ່າງປະເທດ : ໃຫ້ພະແນກການເງິນແຂວງ ຄົ້ນຄວ້າແລະກວດກາຄືນວ່າສາມາດປັບປຸງແລະຫັນເປັນຂໍ້ກຳນົດຂອງແຂວງ ເປັນໄປໄດ້ບໍ່.

- ກ່ຽວກັບການແກ້ໄຂການປະກອບອາຊີບຄົນຕ່າງດ້າວ, ຕ່າງປະເທດ : ກ່ຽວກັບການຄຸ້ມຄອງແລະກວດກາຄືນໃຫ້ລະອຽດໃນການເຄື່ອນໄຫວດຳເນີນທຸລະກິດ ຂອງເຂົາເຈົ້າໃຫ້ເຂົ້າສູ່ລະບຽບຫຼັກການແລະລະບຽບກົດໝາຍ ພ້ອມກັນນີ້ ຄົ້ນຄວ້າເບິ່ງວ່າຕໍ່ກັບມູນຄ່າການລົງທຶນດຳເນີນທຸລະກິດທີ່ບໍ່ ເຖິງມູນຄ່າ ຕາມລະບຽບການນັ້ນສາມາດສ້າງເປັນກຸ່ມດຳເນີນທຸລະກິດ ແລະຂຶ້ນທະບຽນບຸກຄົນເປັນຜູ້ຄຸ້ມຄອງໃນຂອບເຂດດຽວກັນ.

- ປະສານສົມທົບກັບ ປກສແຂວງ ເພື່ອກວດກາຄືນບັນຊີລາຍຊື່ຜູ້ທີ່ເຄື່ອນໄຫວໃນການປະກອບອາຊີບຖ້າເອກະສານບໍ່ຖືກຕ້ອງແລະບໍ່ຄົບຖ້ວນຕາມເງື່ອນໄຂຂອງການລົງທຶນທີ່ໄດ້ກຳນົດໄວ້ແມ່ນບໍ່ໃຫ້ເຂົ້າມາອີກ. ເຈົ້າໜ້າທີ່ຕ້ອງເຂັ້ມງວດແລະບໍ່ອະນຸຍາດໃຫ້ໃຊ້ວີຊາທ່ອງທ່ຽວເພື່ອເຄື່ອນໄຫວການອອກແຮງງານແລະເຄື່ອນໄຫວດຳເນີນທຸລະກິດ ຖ້າພົບເຫັນຕ້ອງປັບໄໝແລະແກ້ໄຂຢ່າງເດັດຂາດ.

- ສຳລັບຜູ້ທີ່ຈະເຂົ້າມາທ່ອງທ່ຽວຕ້ອງມີຜູ້ຮັບຮອງກຳນົດເວລາຈະແຈ້ງ.ຖ້າໝົດເວລາທີ່ກຳນົດໄວ້ຕ້ອງກັບປະເທດທັນທີ.

4. ກ່ຽວກັບການຜະລິດເປັນສິນຄ້າ : ມອບໃຫ້ພະແນກກະສິກຳແລະປ່າໄມ້ແຂວງສືບຕໍ່ຕິດຕາມແລະຊຸກຍູ້ສົ່ງເສີມໃນການຜະລິດເປັນສິນຄ້າໂດຍການຫັນປ່ຽນໂຄງປະກອບເສດຖະກິດຂອງແຂວງໃຫ້ເປັນຮູບປະທຳຫຼາຍຂຶ້ນ ພ້ອມກັນນີ້ກໍ່ຕ້ອງ ຊຸກຍູ້ໃນການຜະລິດຕະພັນໃຫ້ເປັນເອກະລັກຂອງແຂວງ.ໂດຍສົມທົບກັບບໍລິສັດທີ່ລົງທຶນ ເພື່ອຊຸກຍູ້ການຜະລິດຕິດພັນກັບການຕະຫຼາດຂອງເຂົາເຈົ້າ ເປັນຕົ້ນ : ບໍລິສັດຮ່ວງແຮ້ງ.

- ມອບໃຫ້ຫ້ອງວ່າການແຂວງຂຶ້ນແຜນນຳພາລົງຕິດຕາມເບິ່ງດ້ານດີແລະດ້ານບໍ່ດີກ່ຽວກັບກິດຈະການຂອງບໍລິສັກຮ່ວງແຮ້ງທີ່ດຳເນີນຢູ່.

- ກ່ຽວກັບການສະໜັບສະໜູນທຶນຮອນແບບເກື້ອກູນໃຫ້ແກ່ຜູ້ປະກອບການຕໍ່ໄປລັດຈະບໍ່ສະໜັບສະໜູນແຕ່ຈະຊ່ວຍໃນດ້ານລະບຽບການ ແລະ ອື່ນໆ.

- ມອບໃຫ້ຫ້ອງວ່າການແຂວງປັບປຸງ ແລະຈັດວາລະກອງປະຊຸມຢ່າງເປັນປົກກະຕິ ໂດຍເລືອກເອົາບັນຫາທີ່

ເຄັ່ງຮ້ອນເພື່ອປຶກສາຫາລືແກ້ໄຂຮ່ວມກັນແລະສືບຕໍ່ປະຊຸມໃນທຸກໆເດືອນ, ອັນໃດມີການຮັບຮອງຈະເຮັດມະຕິຕົກລົງແລະແຈ້ງຜົນກອງປະຊຸມໃຫ້ຜູ້ເຂົ້າຮ່ວມຮັບຊາບແລະເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

- ແຕ່ລະເດືອນຫຼືໄຕມາດຈະໄດ້ຈັດວາລະໃຫ້ການນຳແຂວງລົງຊຸກຍູ້,ຕິດຕາມ ແລະ ເກັບກຳສະພາບຕົວຈິງຢູ່ທ້ອງຖິ່ນຮາກຖານ, ເພື່ອຮັບປະກັນການຊີ້ນຳແຕ່ຫົວທີ ແລະ ຖ້າວຽກກ່ຽວຂ້ອງກັບຂົງເຂດວຽກງານໃດໃຫ້ພາກສ່ວນນັ້ນຕິດຕາມລົງໄປນຳ.

5. ກ່ຽວກັບປັບປຸງແຜນການດຳເນີນງານ : ໃຫ້ພະແນກການອ້ອມຂ້າງແຂວງປະກອບ ຄຳຄິດເຫັນ ແລະ ສະໜອງຂໍ້ມູນ ຮ່າງແຜນດຳເນີນງານໃຫ້ຫ້ອງວ່າການແຂວງປັບປຸງ ແລະ ສະເໜີ ໃຫ້ກອງປະຊຸມເຈົ້າແຂວງ-ຮອງເຈົ້າແຂວງຮັບຮອງໃນເດືອນຕໍ່ໄປ.

ຕອນທ້າຍໃນກອງປະຊຸມ ເຈົ້າແຂວງໄດ້ແຈ້ງສະພາບການໃນເຂດຊາຍແດນໃຫ້ຜູ້ແທນກອງປະຊຸມຮັບຊາບແລະເປັນເອກະພາບກັນ.

ກອງປະຊຸມອົງການລັດຂັ້ນແຂວງປະຈຳເດືອນ 1-2 ປີ 2017 ໄດ້ດຳເນີນເປັນເວລາ 1 ວັນເຕັມ,ມາຮອດເວລາ 16:00 ໂມງ ກອງປະຊຸມກໍ່ໄດ້ປິດລົງຢ່າງເປັນທາງການ.

ເຈົ້າແຂວງ
ປະທານກອງປະຊຸມ

ປອ ບານ ວິທະຍາກ

ຜູ້ບັນທຶກກອງປະຊຸມ

ທະນູໄຊ ບັນຊາລິດ